ສະມາຄົມອະດີດ ນັກສຶກສາລາວ ຈາກຍີ່ປຸ່ນ

JAOL Japan Alumni Of Laos

ラオス元日本留学生会

# ຈົດໝາຍຂ່າວ - Newsletter

## ເພື່ອທຸກຄົນ ແລະ ເປັນຂອງທຸກຄົນ

ສະບັບທີ 5

2009

# ຈົດຫມາຍຂ່າວ — Newsletter

## ການບໍລິຫານສະມາຄົມ ແລະ ການຈັດກິດຈະກຳໃນຕໍ່ຫນ້າ

ກ່ອນອື່ນຫມົດ, ໃນນາມຂອງປະທານສະມາຄົມ ຂ້າພະເຈົ້າຢາກຂໍສະແດງຄວາມຂອບໃຈມາຍັງ ຄະນະບັນນາທິການທີ່ໄດ້ເສຍສະຫລະ ທັງເວລາແລະເຫື່ອແຮງ ເພື່ອປະກອບສ່ວນໃຫ້ຈົດຫມາຍຂ່າວ ສະບັບທີ 5 ນີ້ສຳເລັດດ້ວຍດີ. ພ້ອມດຽວກັນ ກໍ່ຂໍຂອບໃຈ ບັນດາສະມາຊິກ ທີ່ໄດ້ປະກອບສ່ວນຄຳຄິດຄຳເຫັນ ແລະ ບົດຄວາມລົງໃນສະບັບນີ້. ຂໍສະແດງຄວາມຄູ້ບຸນຄຸນມາຍັງສະຖານທູດຍີ່ປຸ່ນປະຈຳລາວ ທີ່ໄດ້ສະຫນັບສະຫນູນ ງົບປະມານສ່ວນຫນຶ່ງໃນການຈັດພິມຈົດຫມາຍຂ່າວສະບັບນີ້ ກໍ່ຄືສະບັບອື່ນໆທີ່ຜ່ານມາ.

ດັ່ງທີ່ໄດ້ກ່າວໄວ້ໃນຫົວຂໍ້, ຂ້າພະເຈົ້າຢາກຂໍສະເຫນີຄວາມຄິດຄວາມເຫັນ ຕໍ່ການບໍລິຫານຂອງສະມາຄົມ ແລະການຈັດກິດຈະກຳຕ່າງໆໃນຕໍ່ຫນ້າ ວ່າຄວນຈະເປັນໄປໃນຮູບແບບໃດ.

ໂດຍພື້ນຖານແລ້ວ, ສະມາຄົມແມ່ນເປັນຂອງສະມາຊິກຫມົດທຸກຄົນ ແລະວຽກງານຂອງສະມາຄົມກໍ່ແມ່ນສະມາຊິກຫມົດທຸກຄົນ ມີທັງສິດ ແລະພັນທະໃນການອອກແນວຄິດ, ປະກອບຄຳຄິດຄຳເຫັນ ແລະຮ່ວມກັນຈັດຕັ້ງປະຕິບັດ ຕາມແຕ່ຄວາມສະດວກ ແລະຄວາມສົນໃຈຂອງໃຜລາວ. ຄະນະບໍລິຫານງານສະມາຄົມແມ່ນມີຫນ້າທີ່ ສັງລວມວຽກງານຕ່າງໆ, ຂໍ້ມູນຕ່າງໆ, ສະເຫນີລະບຽບຕ່າງໆ ເພື່ອສ້າງຄວາມເຂັ້ມແຂງທາງດ້ານອົງກອນໃຫ້ກັບສະມາຄົມ. ພ້ອມດຽວກັນກໍ່ມີຫນ້າທີ່ປະສານງານລະຫວ່າງສະມາຊິກ ແລະຕ່າງຫນ້າສະມາຄົມຕິດຕໍ່ພົວພັນກັບພາກສ່ວນອື່ນ. ໂດຍການເຮັດວຽກຂອງຄະນະບໍລິຫານ ເປັນແບບອາສາສະຫມັກໂດຍບໍ່ມີຄ່າຕອບແທນເປັນເງິນອຸດຫນູນໃດໆ. ຄິດວ່າ, ການບໍລິຫານໃນລັກສະນະແບບນີ້ ຈະຍັງຄົງຖືກດຳເນີນຕໍ່ໄປຈົນກວ່າມີວິທີການແບບແຜນການເຮັດວຽກທີ່ດີກວ່ານີ້ຖືກສະເຫນີຂື້ນມາ. ຢູ່ທີ່ນີ້, ຂ້າພະເຈົ້າຢາກຈະເນັ້ນຫນັກຢູ່ທີ່ການຈັດກິດຈະກຳຫລາຍກວ່າ. ຄວາມຄິດພື້ນຖານຂອງການຈັດກິດຈະກຳແມ່ນວ່າ: ກິດຈະກຳທັງຫມົດແມ່ນສະມາຊິກ ຜູ້ໃດຫນຶ່ງ ຫລື ກຸ່ມໃດຫນຶ່ງ ທີ່ມີແນວຄວາມຄິດຢາກເຮັດຢາກທຳອັນໃດຫນຶ່ງ ກໍ່ພຽງແຕ່ຍົກມັນຂຶ້ນມາ ແລະເຊີນຊວນສະມາຊິກທຸກຄົນເຂົ້າຮ່ວມນຳ. ສຳລັບຜູ້ທີ່ສົນໃຈໃນກິດຈະກຳນັ້ນກໍ່ຕື່ນຕົວໃນການມີສ່ວນຮ່ວມ ແລະເປັນເຈົ້າການໃນການຈັດຕັ້ງປະຕິບັດນຳກັນ.

ໃນ2-3ປີທີ່ຜ່ານມານີ້ ຈະສັງເກດເຫັນໄດ້ວ່າ, ມີການແຈ້ງຂ່າວໃຫ້ສະມາຊິກໄດ້ຮັບຮູ້ຂໍ້ມູນຫລາຍຂື້ນ, ແລະສະມາຊິກກໍ່ມາຮ່ວມເປັນຂະບວນຫລາຍຂຶ້ນ. ແຕ່ສິ່ງຍັງເປັນຂໍ້ຄົງຄ້າງຢູ່ ກໍ່ແມ່ນວ່າ ຜູ້ສະເຫນີຈັດກິດຈະກຳຕ່າງໆສ່ວນຫລາຍລະຍັງແມ່ນຜູ້ເກົ່າຜູ້ເດີມຢູ່, ຖ້າຜູ້ທີ່ເຄີຍສະເຫນີເຮັດອັນນີ້ອັນນັ້ນ ບໍ່ສະເຫນີເຮັດຫຍັງ ກໍ່ຖືວ່າກິດຈະກຳກໍ່ງຽບໄປ. ຍົກສິ່ງເຫລົ່ານີ້ຂຶ້ນມາ ກໍ່ບໍ່ ໄດ້ມີແນວຄິດວ່າ ຜູ້ໃດຖືກ ຜູ້ໃດຜິດ, ພຽງແຕ່ຢາກຍົກບັນຫາໃຫ້ພວກເຮົາ ອະດີດນັກສຶກສາຍີ່ປຸ່ນທຸກຄົນເຫັນນຳກັນ ແລະແກ້ໄຂນຳກັນ. (ອ່ານຕໍ່ຫນ້າ 6)

ໃນສະບັບນີ້


ການບໍລິຫານສະມາຄົມ... 2

ມາຮູ້ຈັກກັບຄະນະບໍລິ.... 3

ພ້ອມກັນກ້າວໄປສູ່........ 3

ວຽກງານການປະກັນ...... 4

......JICafe) ແມ່ນຫັຍງ? 4

ປະເພນີທີ່ຄວນຮູ້ 5

ຄຳຄິດຄຳເຫັນຂອງ 5

ພື້ນສາມສາຍ ຊ່າມີເຊັນ 6

ການປະກວດພາບຖ່າຍ.... 6

ປະມວນຮູບພາບກິດຈະກຳ 10

ກະດານຂ່າວ JAOL ..... 11


## ບົດຄວາມຈາກ ບກ

ຈົດຫມາຍຂ່າວສະບັບນີ້ມາພ້ອມກັບໜ້າຕາ ແລະເນື້ອໃນທີ່ແຕກຕ່າງໄປຈາກສະບັບກ່ອນໆ. ເລີ່ມຕົ້ນໂດຍການສະເໜີເລື່ອງກ່ຽວກັບ ການບໍລິຫານວ່າຄວນເປັນໄປແນວໃດ? ຈາກນັ້ນກໍ່ມາຮູ້ຈັກກັບຄະນະບໍລິຫານຊຸດໃຫມ່ຂອງ JAOL, ທີ່ພ້ອມຈະນຳພາ ແລະເຮັດການປັ່ງປແປງປັບປຸງ JAOLໃຫ້ດີຍິ່ງຂື້ນ.

ມາເບິ່ງຄວາມສຳພັນລາວ-ຍີ່ປຸ່ນ ຜ່ານ "ປີແລກປ່ຽນລະຫວ່າງບັນດາປະເທດແມ່ນ້ຳຂອງ-ຍີ່ປຸ່ນ2009" ເຊິ່ງມີກໍ່ມີຫຼາຍໆກິດຈະກຳ ການແລກປ່ຽນທາງ ດ້ານເສດຖະກິດ, ວັດທະນະທຳ, ສົ່ງເສີມການທ່ອງທ່ຽວ. ຈາກນັ້ນຍັງມີການນຳສະເຫນີກ່ຽວກັບປະເພນີລາວ ແລະ ດົນຕີພື້ນເມື່ອງຍີ່ປຸ່ນ. ມີຄວາມຮູ້ສຶກຂອງຜູ້ເປັນແມ່ທີ່ຜູ້ເປັນພໍ່ຈະບໍ່ສາມາດປະສົບໄດ້. ແລະຍັງມີບົດຄວາມພິເສດຂອງຜູ້ທີ່ຢືນຢູ່ແຖວຫນ້າຂອງວົງການປະກັນຄຸນະພາບການສຶກສາມາເຮັດໃຫ້ຄົນຮັບຮູ້ກ່ຽວກັບບັນຫານີ້.

ຍ້ອນຫລາຍໆສະພາບແວດລອ້ມ, ໃນຈົດຫມາຍຂ່າວນີ້ອາດຈະມີຂໍ້ຂາດຕົກບົກຜ້ອງ ໃນດ້ານເນື້ອຫາ ແລະພາສາລາວກໍ່ຂໍອະໄພນຳທີນີ້ດ້ວຍ. ບກ

ສີາພິເສດ

-ປະຫວັດຫຍໍ້ຂອງຄະນະປະທານ

-ຢາກໃຫ້ຈົດຫມາຍຂ່າວເປັນແບບໃດ?

# ມາຮູ້ຈັກກັບຄະນະບໍລິຫານ JAOL ຊຸດທີ3

ພາຍຫລັງຈາກຄະນະບໍລິຫານຊຸດທີ2 ໄດ້ສຳເລັດຫນ້າທີການບໍລິຫານສະມາຄົມຕາມວະລະ, ຈິ່ງໄດ້ມີການຈັດງານສະຫລູບຜົນງານ ແລະເລືອກຕັ້ງເອົາຄະນະບໍລິຫານຊຸດໃຫມ່ ຊຸດທີ3 ຂື້ນຢູ່ສູນຮ່ວມມືລາວ-ຍີ່ປຸ່ນດ້ານຊັບພະຍາກອນມະນຸດ (LJC) ໃນວັນທີ 21/06/2008. ຕະຫລອດໄລະຍະເວລາ 2ປີ ຂອງການບໍລິຫານຂອງຄະນະບໍລິຫານຊຸດທີ2 ສາມາດຢາດໄດ້ ແລະປະຕິບັດໄດ້ຕາມຈຸດປະສົງ ແລະເປົ້າຫມາຍຂອງສະມາຄົມ ໄດ້ຢ່າງຫລວງຫລາຍ ແລະມີປະສິດທິຜົນສູງ. ໃນນາມຄະນະບໍລິຫານຊຸດທີ3 ນີ້ ຂໍສັນຍາວ່າ ຈະສືບຕໍ່ປະຕິບັດຕາມສິດແລະຫນ້າທີ່ ທີ່ທາງສະມາຄົມມອບໃຫ້, ນຳພາສະມາຊິກປະກອບສ່ວນ ເຮັດໃຫ້ສະມາຄົມມີຄວາມເຂັ້ມແຂງ ຈາກພາຍໃນໄປສູ່ພາຍນອກ, ເຮັດໃຫ້ສະມາຄົມເປັນທີ່ຮັບຮູ້ໃນສັງຄົມ ກໍ່ຄືການປະກອບສ່ວນ ແລະມີສ່ວນໃນການພັດທະນາສ້າງສາປະເທດຊາດ ແລະ ການເສີມສ້າງສາຍພົວພັນຄວາມຮ່ວມມືລະຫວ່າງລາວ-ຍີ່ປຸ່ນໃຫ້ແຫນ້ນແຟ້ນຂື້ນ. ເຖີງວ່າຄະນະບໍລິຫານຊຸດທີ3 ຈະຍັງມີຄະນະບໍລິຫານຊຸດກ່ອນເຖິງເຄິ່ງຫນຶ່ງກໍ່ຕາມ ທາງຄະນະພວກເຮົາກໍ່ຈະພະຍາຍາມໃຫ້ເກີດມີການປ່ຽນແປງ ແລະການພັດທະນາແບບແຜນວິທີເຮັດວຽກ ເຮັດໃຫ້ສະມາຄົມອະດີດນັກສຶກສາລາວຈາກຍີ່ປຸ່ນ ເປັນສະມາຄົມຂອງທຸກໆຄົນ ແລະເພື່ອທຸກໆຄົນ. ແລະສິ່ງສຳຄັນອີກຢ່າງຫນຶ່ງທີ່ຄະນະບໍລິຫານຊຸດໃຫມ່ນີ້ ຈະຕ້ອງໃຫ້ຄວາມສຳຄັນຕໍ່ການພັດທະນາບຸກຄະລາກອນຫນຸ່ມຫນ້ອຍ ເພື່ອຈະມາບໍລິຫານສະມາຄົມໃນອານະຄົດ. ແລະອີກເທື່ອນຶ່ງ ຂໍກ້າວຄຳວ່າ “大変ご苦労さまでした” ຕໍ່ຄະນະບໍລິຫານຊຸດທີ2.

ຢູ່ທີ່ນີ້, ຈະແນະນຳໃຫ້ຮູ້ຈັກຄະນະບໍລິຫານຊຸດທີ3 ທີ່ໄດ້ຜ່ານການເລືອກຕັ້ງໃນຄັ້ງວັນທີ 21/06/2008. ເຊິ່ງໃນງານດັ່ງກ່າວ ມີສະມາຊິກຂອງສະມາຄົມ29ທ່ານ ແລະພະນັກງານຈາກສະຖານທູດຍີ່ປຸ່ນ3ທ່ານເຂົ້າຮ່ວມ. ຜ່ານການລົງສະຫມັກ ແລະການຢັ່ງສຽງຢ່າງເປັນປ່ອງໃສ ຈາກຜູ້ລົງສະຫມັກ 14 ທ່ານ ສາມາດໄດ້ເລືອກປະທານແລະຮອງປະທານສອງທ່ານ ຈາກຜູ້ທີ່ໄດ້ຄະແນນສຽງສູງກວ່າຫມູ່. ຫລັງຈາກນັ້ນຄະນະປະທານ ຈິ່ງເລືອກເອົາຄະນະບໍລິຫານຊຸດທີ3 ເຊິ່ງມີລາຍລະອຽດລຸ່ມນີ້:

1. ທ່ານ ປັນຍາ ຈັນທະວົງ, ຮອງຫົວໜ້າສູນຮັບປະກັນຄຸນນະພາບການສຶກສາ ກະຊວງສຶກສາທິການ, ເປັນປະທານ
2. ທ່ານ ບັນດາໄຊ ລໍວັນໄຊ, ຄະນະອຳນວຍການ, ບໍລິສັດບີລາວ, ເປັນຮອງປະທານຜູ້ທີ1
3. ທ່ານ ດຣ ບຸນລ້ອນ ດ້ວງເງິນ, ຮອງຜູ້ອຳນວຍການ, ສູນຮ່ວມມືດ້ານຊັບພະຍາກອນມະນຸດລາວ-ຍີ່ປຸ່ນ, ມະຫາວິທະຍາໄລແຫ່ງຊາດ, ເປັນຮອງປະທານຜູ້ທີ2
4. ທ່ານນາງ ປາລິມາ ເພັດສີລິແສງ, ອຳນວຍການເຮືອນພັກວິນລາທາດຫລວງ, ເປັນຄະນະຝ່າຍພົວພັນຍີ່ປຸ່ນ
5. ທ່ານ ນາງບົວສອນ ວົງຖາວອນ, ທີ່ປຶກສາດ້ານການບໍລິຫານບໍລິສັດການເງິນເວັດສະເຕີນຍູນຽນ, ເປັນຄະນະຝ່າຍບັນຊີ
6. ທ່ານ ມິດທະວິສຸກ ລັດຕະນະ, ຜູ້ບໍລິຫານໂຄງການ, ອົງການສະຫະປະຊາຊາດ, ເປັນຄະນະຝ່າຍກິດຈະກຳພາຍນອກ
7. ທ່ານ ອາໂນລັກ ຈັນປະສິດ, ຜູ້ປະສານງານໂຄງການ, ອົງການ ໄຈກ້າ, ເປັນຄະນະຝ່າຍກິດຈະກຳພາຍໃນ
8. ທ່ານນາງ ເພັດມະນີວອນ ທັດຕະມະວົງ, ຜູ້ປະສານງານຫ້ອງການໄຈກາເຟ, ເປັນຄະນະຝ່າຍໂຄສະນາ
9. ທ່ານນາງ ສາລີພອນ ອຸດທະຈັກ, ວິຊາການ, ສູນສະຖິຕິ-ເຕັກໂນໂລຊີຂ່າວສານການສຶກສາ ກະຊວງສຶກສາທິການ, ເປັນເລຂານຸການ

ກໍ່ຂໍຝາກຄະນະບໍລິຫານຊຸດທີ3 ນຳທຸກໆຄົນມາຍັງທີ່ນີ້ດ້ວຍ. ສາມາດຕິດຕໍ່ຫາຄະນະໄດ້ໂດຍຜ່ານ ອີເມລ info@jaol-group.org ຫລືໂທລະສັບຫາໂດຍກົງກໍ່ໄດ້.

*PS : ບກ ຕ້ອງຂໍໂທດທີ່ບໍ່ສາມາດ ເອົາບົດແນະນຳແຕ່ລະທ່ານມາສະເຫນີ ຂໍຕິດເປັນຈົດຫມາຍຂ່າວສະບັບຫນ້າ ຫລື E-newsletter ເດີ!*

# ພ້ອມກັນກ້າວໄປສູ່ອະນາຄົດ, ອະນຸພາກພື້ນແມ່ນ້ຳຂອງແລະຍີ່ປຸ່ນ

ທຸກໆຄົນຮູ້ບໍ່ວ່າປີນີ້ແມ່ນ “ປີແລກປ່ຽນລະຫວ່າງບັນດາປະເທດແມ່ນ້ຳຂອງ-ຍີ່ປຸ່ນ2009” ເຊິ່ງເອີ້ນເປັນພາສາຍີ່ປຸ່ນວ່າ ”日メコン交流年2009”. ໃນຕະຫລອດປີ2009ນີ້, ຈະມີການແລກປ່ຽນຫລາຍໆດ້ານ ຂອງພາກລັດ ແລະ ພາກເອກະຊົນ, ລວມທັງການສົນທະນາດ້ານການເມືອງ, ການແລກ ປ່ຽນທາງດ້ານເສດຖະກິດ, ວັດທະນະທຳ, ສົ່ງເສີມການທ່ອງທ່ຽວ, ແລກປ່ຽນຊາວຫນຸ່ມ ແລະ ອີກຫລາຍໆການເຄື່ອນໄຫວ ທີ່ຈະໄດ້ຈັດຂື້ນໃນບັນດາປະເທດແມ່ນ້ຳຂອງ ແລະ ຍີ່ປຸ່ນ. ປີແລກປ່ຽນນີ້ມີຈຸດປະສົງແມ່ນ ເພື່ອສົ່ງເສີມຄວາມເຂົ້າໃຈ ແລະ ການຮ່ວມມືລະຫວ່າງບັນດາປະເທດແມ່ນ້ຳຂອງ ແລະ ຍີ່ປຸ່ນ.

ປີແລກປ່ຽນນີ້ ແມ່ນໄດ້ເກີດມາຈາກໝາກຜົນຂອງກອງປະຊຸມລັດຖະມົນຕີຕ່າງປະເທດຍີ່ປຸ່ນ-ອະນຸພາກພື້ນແມ່ນ້ຳຂອງຄັ້ງທຳອິດ ທີ່ໄດ້ຈັດຂື້ນໃນວັນທີ16 ມັງກອນ 2009 ຢູ່ໂຕກຽວ, ເຊິ່ງມີລັດຖະມົນຕີຕ່າງປະເທດຂອງກຳປຸເຈຍ, ລາວ, ມຽນມ້າ, ໄທ, ຫວຽດນາມ ແລະ ຍີ່ປຸ່ນເຂົ້າຮ່ວມ. ໃນກອງປະຊຸມດັ່ງກ່າວໄດ້ມີການຕັດສິນໃຈທີ່ຈະແລກປ່ຽນໃນຫຼາຍຂົງເຂດຄື ດ້ານການເມືອງ, ເສດຖະກິດ, ວັດທະນາທຳ ແລະ ການທ່ອງທ່ຽວ ເຊິ່ງໄດ້ກໍ່ເກີດປີແລກປ່ຽນລະຫວ່າງບັນດາປະເທດແມ່ນ້ຳຂອງ-ຍີ່ປຸ່ນ. (ອ່ານຕໍ່ຫນ້າ 6)

# ວຽກງານການປະກັນຄຸນະພາບການສຶກສາ

ໂດຍ: ປັນຍາ ຈັນທະວົງ, ຮອງຜູ້ອຳນວຍການສູນຮັບປະກັນຄຸນະພາບການສຶກສາ ກະຊວງສຶກສາທິການ

ທ້າຍປີ2008, ຂ້າພະເຈົ້າໄດ້ຮັບການຍົກຍ້າຍບ່ອນເຮັດວຽກຈາກຄະນະວິສະວະກຳສາດ ມະຫາວິທະຍາໄລແຫ່ງຊາດ ໄປຢູ່ສູນຮັບປະກັນຄຸນະ ພາບການສຶກສາກະຊວງສຶກສາທິການ. ໃນຈົດ ໝາຍຂ່າວສະບັບທີ5 ນີ້ ຂໍນຳສະເໜີບາງຈຸດທີ່ ກ່ຽວພັນກັບໜ້າທີ່ວຽກງານໃໝ່ ມາແລກປ່ຽນ ກັບສະມາຊິກ.

ການປະກັນຄຸນະພາບ ຫລືພາສາອັງກິດເອີ້ນວ່າ Quality Assurance (QA) ໂດຍລວມແລ້ວ ແມ່ນເປັນວຽກງານທີ່ໄດ້ຮັບການພັດທະນາມາດົນນານແລ້ວ, ໂດຍຜູ້ຜະລິດສິນຄ້າ ຫລືເຈົ້າຂອງໂຮງຈັກໂຮງງານ ຈະກະທຳQA ເພື່ອກວດກາຄຸນະພາບຂອງສິນຄ້າໃນແຕ່ລະຂະບວນການຜະລິດ ເພື່ອໃຫ້ໝັ້ນໃຈແລະສາມາດຢັ້ງຢືນກັບລູກຄ້າໄດ້ວ່າ ສິນຄ້າຂອງຕົນມີຄຸນະພາບໄດ້ຕາມມາດຕະຖານທີ່ລູກຄ້າຕ້ອງການ. ສ່ວນການນຳເອົາລະບົບ QA ເຂົ້າມາໃຊ້ໃນຂະແໜງການສຶກສາ ແມ່ນມີປະຫວັດສາດບໍ່ທັນຍາວໄກເທົ່າໃດ, ໃນສາຍຂອງການສຶກສາຊັ້ນສູງກໍ່ມີພຽງປະມານ 10ກວ່າປີເທົ່ານັ້ນເອງ. ປະເທດໄທກໍ່ປະມານ 10ປີເຊັ່ນດຽວກັນ, ປະເທດຫວຽດນາມແມ່ນຫາກໍ່ໄດ້ 5ປີ, ສ່ວນລາວເຮົາແມ່ນຫາກໍ່ຢູ່ຈຸດເລີ່ມຕົ້ນ. ໂດຍໃນກາງປີ2008, ກະຊວງສຶກສາທິການໄດ້ສ້າງຕັ້ງສູນຮັບປະກັນຄຸນະພາບການສຶກສາຂຶ້ນ.

ການປະກັນຄຸນະພາບການສຶກສາ ມີຄວາມໝາຍຄືແນວໃດ? ເຮົາທຸກຄົນລຶ້ງເຄີຍກັບຄຳວ່າ "ປະກັນ" ຫລື "ຮັບປະກັນ" ມາແຕ່ໃດແລ້ວ, ໂດຍການປະກັນ ແມ່ນການເຮັດໃຫ້ມີຄວາມໝັ້ນໃຈຕໍ່ສິ່ງໃດສິ່ງໜຶ່ງ. ສະນັ້ນ, ການປະກັນຄຸນະພາບກໍ່ເປັນການສ້າງຄວາມໝັ້ນໃຈ ຄວາມເຊື່ອໝັ້ນວ່າ ສິ່ງທີ່ໄດ້ຮັບປະກັນ ຈະມີຄຸນະພາບຕາມມາດຕະຖານທີ່ໄດ້ກຳນົດໄວ້. ໂດຍສິ່ງທີ່ຈະໄດ້ຮັບການປະກັນ ອາດເປັນໄປໄດ້ທັງວັດຖຸສິ່ງຂອງ ເຊັ່ນເຄື່ອງໃຊ້ໄຟຟ້າ, ລົດລາງພາຫະນະ, ອາຫານ, ໂຮງຮຽນ ຫລືເປັນໃນຮູບແບບຂອງຂະບວນການກະທຳໃດໜຶ່ງ ຢ່າງເຊັ່ນວ່າ ການບໍລິຫານ, ການບໍລິການ ຫລືການສຶກສາ. ສະນັ້ນ, ຄຳວ່າການປະກັນຄຸນະພາບການສຶກສາ ຈຶ່ງໝາຍເຖິງການສ້າງຄວາມໝັ້ນໃຈ ໃຫ້ກັບພໍ່ແມ່ປະຊາຊົນ ໃຫ້ກັບສັງຄົມ ກໍ່ຄືການຈັດຕັ້ງພັກ-ລັດ ວ່າການສຶກສາຂອງເຮົາມີຄຸນະພາບ ຈະໃຫ້ລູກຫລານເຂົ້າຮຽນຢູ່ບ່ອນໃດຢູ່ທ້ອງຖິ່ນໃດ ກໍ່ຈະໄດ້ຮັບການສຶກສາທີ່ມີຄຸນະພາບໄດ້ມາດຖານ, ຜູ້ຮຽນຈະໄດ້ຮັບການພັດທະນາ ໃຫ້ກາຍເປັນຊັບພະຍາກອນມະນຸດ ທີ່ມີຄຸນະພາບຕາມຄວາມຕ້ອງການຂອງສັງຄົມ ແລະປະເທດຊາດ.

(ອ່ານຕໍ່ໜ້າ 7)



# Lao – Japan Communication Plaza (JICafe) ແມ່ນຫຍັງ ?

ໃນສະບັບກ່ອນກໍ່ໄດ້ມີບົດຄວາມກ່ຽວກັບ ການບໍລິຫານ JICafe ຂອງJAOL ມາແລ້ວ, ແລະໃນກິດຈະກຳຕ່າງໆຂອງJAOL ຈະມັກໄດ້ຍິນຄຳວ່າ ໄຈ້ຄາເຟ ເຊິ່ງໝາຍເຖິງສະຖານທີແຫ່ງນີ້. ໃນສະບັບນີ້ຈະມາເວົ້າເຖິງ JICafeແມ່ນຫຍັງ?

ໃນເດືອນມີນາ 2006, ອົງການຮ່ວມມືສາກົນຍີ່ປຸ່ນ (JICA) ໄດ້ເປີດສູນລວມຂໍ້ມູນຂ່າວສານການຮ່ວມມືລາວ-ຍີ່ປຸ່ນຂຶ້ນ, ເຊິ່ງມີຊື່ເປັນພາສາອັງກິດແມ່ນ Lao–Japan Communication Plaza ຫລືເອີ້ນຫຍໍ້ວ່າ JICafe. ໂດຍມີຈຸດປະສົງຄື 1.ໃຫ້ຂໍ້ມູນຂ່າວສານການຮ່ວມມືສາກົນຂອງຍີ່ປຸ່ນ ເຊິ່ງກໍ່ມີການແລກປ່ຽນວັດທະນະທຳນຳປະຊາຊົນທົ່ວໄປ ໂດຍການປະຕິບັດງານຂອງJICA ແລະ ອົງການຕ່າງໆຂອງຍີ່ປຸ່ນ. 2.ມີສະຖານທີ່ໄວ້ເພື່ອວາງສະແດງຜົນງານ ກິດຈະກຳ ແລະ ສາມາດຈຳໜ່າຍຜະລິດຕະພັນຂອງ JICA ແລະ ອົງການຕ່າງໆຂອງຍີ່ປຸ່ນ. 3.ໃຫ້ຂໍ້ມູນພື້ນຖານກ່ຽວກັບລາວ, ຂໍ້ມູນອົງການຮ່ວມມືສາກົນ,ລະບຽບກົດໝາຍ ແກ່ອົງການທີ່ບໍ່ຂຶ້ນກັບລັດຖະບານ (NGO) ຂອງຍີ່ປຸ່ນ ຫຼືອົງການໃດທີ່ຈະເລີ່ມປະຕິບັດວຽກງານໃນລາວ. ແລະຍັງມີກິດຈະກຳຄື 1.ການວາງສະແດງຂໍ້ມູນຂ່າວສານແນະນຳກິດຈະກຳຂອງJICA ແລະອົງການຕ່າງໆຂອງຍີ່ປຸ່ນ. 2.ການບັນຍາຍກ່ຽວກັບຜົນສຳເລັດກິດຈະກຳຂອງJICA ແລະ ອົງການຕ່າງໆຂອງຍີ່ປຸ່ນ. 3.ກິດຈະກຳເຜີຍແຜ່ກ່ຽວກັບປະເທດລາວໃຫ້ຄົນຍີ່ປຸ່ນໃຫ້ຮູ້ ແລະເຂົ້າໃຈກ່ຽວກັບລາວຫຼາຍຂຶ້ນ. ນອກຈາກນັ້ນ JICafe ຍັງມີການບໍລິການໃຫ້ເຊົ່າຫ້ອງປະຊຸມໃນລາຄາທີ່ປະຢັດ ພ້ອມມີກາເຟລາວ ແລະ ຊາ ໃຫ້ບໍລິການ, ແລະ JICafeຍັງມີຫ້ອງສະມຸດໃຫ້ບໍລິການແກ່ບຸກຄົນທົ່ວໄປ.

ນັບຕັ້ງແຕ່ສົກປີ2007 ເປັນຕົ້ນມາ, JAOLໄດ້ເຂົ້າມາມີສ່ວນຮ່ວມໃນການບໍລິຫານ JICafe, ເຊິ່ງມັນໄດ້ເຮັດໃຫ້ ຫລາຍຄົນ ຫລາຍອົງການໄດ້ຮູ້ແລະໄຊ້ບໍລິການ JICafe ຫລາຍຂຶ້ນ. ແລະJAOLຍັງໄດ້ງົບປະມານສ່ວນໜຶ່ງຈາກການບໍລິຫານນີ້. ຫວັງວ່າ JICafeຈະສາມາດເປັນບ່ອນພົບປະແລກປ່ຽນເຊິ່ງກັນແລະກັນລະຫ່ວາງສະມາຊິກJAOLດ້ວຍກັນ, ກໍ່ຄື ການແລກປ່ຽນລະຫວ່າງລາວ-ຍີ່ປຸ່ນ ໃຫ້ຫລາຍຍິ່ງຂຶ້ນ ເພື່ອເສີມສ້າງມິດຕະພາບຄວາມຮ່ວມມືລາວ-ຍີ່ປຸ່ນໃຫ້ແໜ້ນແຟ້ນຍິ່ງໆຂຶ້ນໄປ.

PS : JICafe = JICA + Café ?? ບກ



# ປະເພນີລາວທີ່ຄວນຮູ້

ໂດຍ: ທ່ານພຣະຈັນແຮມ ສີສະຫວັດ, ພະນັກງານຢູ່ CARE International

<u>ຮີດສິບສອງ, ຄອງສິບສີ່</u>

ເປັນສິ່ງທີ່ຄົນລາວທົ່ວໄປ ໃນສະໄໝບູຮານ ປະພຶດ ປະຕິບັດ ເປັນປະຈຳຕໍ່ຄອບຄົວ, ຊາວບ້ານ ແລະ ສາສະໜາ; ເຊິ່ງໝາຍເຖິງ 'ແບບ', ແບບຢ່າງທາງຄອງບູຮານ, ຄອງໂລກ, ຄອງທຳ. ຮີດສິບສອງ ແມ່ນໃນ ປີໜຶ່ງ ມີ 12 ເດືອນ, ໃນແຕ່ລະເດືອນ ມີບຸນດັ່ງລຸ່ມນີ້:

1. ເດືອນ ມັງກອນ : **ບຸນເຂົ້າກຳ**
2. ເດືອນ ກຸມພາ : **ບຸນກ່ອງເຂົ້າ**

ເຂົ້າມີ ສາລີພ້ອມ ຈອມດອຍກໍພໍ່ຢູ່, ເຂົ້າບໍ່ມີ ສາລີບໍ່ພ້ອມ ຈອມແກ້ວຢູ່ບໍ່ເປັນ

3. ເດືອນ ມີນາ : **ບຸນເຂົ້າຈີ່**

ເຂົ້າຈີ່ບໍ່ໃສ່ນ້□າຕານ ບໍ່ລາດນ້□າອ້ອຍ ຍຈົວນ້ອຍບໍ່ອຸ່ນໃຈ

4. ເດືອນ ເມສາ : **ບຸນພຣະເຫວດ**
5. ເດືອນ ພຶດສະພາ : **ບຸນປີໃໝ່ລາວ**

- ແຮມ 5 ຄ່ຳ ເດືອນ 5: ວັນສັງຂານລ່ວງ, ເປັນວັນທີ່ລ່ວງເລີຍມາຈົນຄົບຮອບ 1 ປີ
- ແຮມ 6 ຄ່ຳ ເດືອນ 5: ວັນເນົາ, ເຊິ່ງເປັນມື້ຕັດຫົວ ພຣະຍາກະ ບິນລະພົມ
- ແຮມ 7 ຄ່ຳ ເດືອນ 5: ວັນສັງຂານຂຶ້ນ, ເປັນມື້ປ່ຽນສັງຂານເກົ່າ ມາເປັນສັງຂານໃໝ່

6. ເດືອນ ມິຖຸນາ : **ບຸນບັ້ງໄຟ**
7. ເດືອນ ກໍລະກົດ : **ບຸນມະໂຫຮານ**
8. ເດືອນ ສິງຫາ : **ບຸນເຂົ້າພັນສາ**

ຂຶ້ນ 15 ຄ່ຳ ເດືອນ 8, ເປັນຮີດໃນເດືອນ 8 ທີ່ປະຕິບັດກັນທຸກໆປີ, ເພາະຍາມຝົນຕົກເພິ່ນ ຈະຕ້ອງໃຫ້ຕູບາຈຳສິນໃນວັດ, ບໍ່ໃຫ້ໄປນອນຢູ່ ວັດອື່ນ ຫລືເວົ້າວ່າ 'ການຈຳວັດ'

9. ເດືອນ ກັນຍາ : **ບຸນຫໍ່ເຂົ້າປະດັບດິນ**

ແຮມ 14 ຄ່ຳ ເດືອນ 9, ເປັນມື້ທີ່ ພະຍາຈ່າຍົມພິບານ ປ່ອຍຜີຈາການະຮົກ ອອກມາຊອກຫາກິນ; ເຊິ່ງມະນຸດຈະເຮັດຫໍ່ເຂົ້າ ອາຫານຄາວ-ຫວານ ມາທານແກ່ຜີເຫລົ່ານັ້ນ

10. ເດືອນ ຕຸລາ : **ບຸນຫໍ່ເຂົ້າສາກ**

ຂຶ້ນ 15 ຄ່ຳ ເດືອນ 10, ຊາວພຸດຈະຕ້ອງໄດ້ເຮັດກິ່ງສະຫລາກ ໃຫ້ຕູບາອາຈານໄດ້ຈົກຈັບເອົາສະຫລາກເຫລົ່ານັ້ນ

11. ເດືອນ ພະຈິກ : **ບຸນອອກພັນສາ**

- ຂຶ້ນ 15 ຄ່ຳ ເດືອນ 11, ອີງຕາມເດືອນ 8 ທີ່ພຣະສົງເຂົ້າພັນສາ, ພໍມາຮອດເດືອນ 11 ພຣະສົງກໍ່ຕ້ອງອອກພັນສາ, ສາມາດ



ໄປ ນອນຢູ່ບ່ອນອື່ນໄດ້. ຕາມປະເພນີ ແລ້ວບຸນອອກພັນສາ ຈະມີການ ຖວາຍສັງຄະ ທານ ແລະ ຍັງເປັນມື້ໄຫລເຮືອໄຟອີກດ້ວຍ

- ແຮມ 1 ຄ່ຳ ເດືອນ 11, ບຸນຊ່ວງເຮືອ
- ຂຶ້ນ 15 ຄ່ຳ ເດືອນ 12, ບຸນນະມັດສະການພຣະທາດຫລວງວຽງຈັນ, ເພື່ອເປັນທີ່ລະນຶກເຖິງວັນສ້າງຕັ້ງພຣະທາດຫລວງວຽງຈັນ

12. ເດືອນ ທັນວາ : **ບຸນກະຖິນ**

(ອ່ານຕໍ່ໜ້າ 8)



# ຄຳຄິດຄຳເຫັນຂອງແມ່ລູກອ່ອນ

ໂດຍ: ປາລິມາ ເພັດສີລີແສງ, ອຳນວຍການເຮືອນພັກວິນລາ ທາດຫລວງ

ໃນໄລຍະນີ້ ມີສະມາຊິກJAOL ຂອງພວກເຮົາໄດ້ແຕ່ງງານ ແລະ ມີລູກອອ່ນອອ່ນກັນຫຼາຍຄົນ, ເຊິ່ງເຮັດໃຫ້ ສະມາຄົມ ຫລື ອາດເວົ້າໄດ້ວ່າ JAOL ຂອງພວກມີສະມາຊິກເພີ່ມຂຶ້ນຕື່ມອີກ.

ມັນບໍ່ແມ່ນເລື່ອງງ່າຍທີ່ຜູ້ຍິງເຮົາຕ້ອງລ້ຽງລູກແລະເຮັດວຽກໄປນຳ, ແຕ່ພວກເຮົາກໍຖືວ່າໂຊກດີຫຼາຍ ຖ້າຈະທຽບກັບຜູ້ຍິງຍີ່ປຸ່ນ ທີ່ຕ້ອງລ້ຽງລູກແລະເຮັດວຽກໃນສັງຄົມ, ທີ່ຕ້ອງໄດ້ຕື່ນແຕ່ເຊົ້າເອົາລູກໄປຝາກໄວ້ບ່ອນລ້ຽງເດັກ, ໃຊ້ເວລາເດີນທາງຫຼາຍຊົ່ວໂມງຂີ່ລົດໄຟອອກໄປເຮັດວຽກ. ມາຄິດເບິ່ງແລ້ວພວກເຮົາຍັງໂຊກດີຫຼາຍແລະໂຊກດີແທ້ໆ ທີ່ມີສາມີ, ພໍ່ແມ່ອ້າຍເອື້ອຍນ້ອງ ແລະ ຍາຕິພີ່ນ້ອງທີ່ຢູ່ບ້ານໃກ້ເຮືອນຄຽງຊ່ວຍດູແລເບິ່ງແຍງລູກນ້ອຍໃຫ້, ເຮັດໃຫ້ມີເວລາ ແລະ ອຸ່ນໃຈ ເວລາທີ່ຕ້ອງໄດ້ໄປເຮັດວຽກ.



ນີ້ເປັນພຽງຄຳຄິດເຫັນອັນນຶ່ງທີ່ຂ້າພະເຈົ້າຮູ້ສຶກໃນນາມທີ່ໄດ້ເປັນແມ່ລູກອອ່ນ, ບໍ່ຮູ້ວ່າແມ່ລູກອອ່ນຜູ້ອື່ນຊິຄຶດຄືກັນຫຼືບໍ່ ຫລືມີສະພາບເວດລ້ອມທີ່ຄ້າຍກັນ. ຖ້າຄວາມຄິດທີ່ເວົ້າມາຖືກຕ້ອງ ແລະ ເປັນຂໍ້ດີ ອາດເປັນຂໍ້ຄິດທີ່ດີໃຫ້ສະມາຊິກJAOL ທີ່ຍັງໂສດນຳເອົາໄປພິຈາລະນາ ຮີບຟ້າວຝັ່ງຕົກລົງປົງໃຈສ້າງຄອບຄົວ. ສ່ວນຜູ້ທີ່ໄດ້ສ້າງຄອບຄົວໄປແລ້ວກໍບໍ່ຕ້ອງລັງເລໃຈ ໃຫ້ຟ້າວສ້າງສະມາຊິກໂຕນ້ອຍໆໃຫ້ JAOL Family ພວກເຮົາອີກເດີ້.

母さん、おなかすいたよ！ ບກ

# ພິນສາມສາຍ ຊ່າມິເຊັນ

ໂດຍ: ບັນດາໄຊ ລໍວັນໄຊ, COO ບໍລິສັດ belao

ຕະຫຼອດໄລຍະເວລາຢູ່ຍີ່ປຸ່ນ ສິ່ງໜຶ່ງທີ່ຂ້ອຍຍັງຕິດໃຈ ແລະ ເສຍດາຍ ທີ່ບໍ່ສາມາດຮຽນຮູ້ດົນຕີພື້ນເມືອງ ຫຼື ກິລາພື້ນເມື່ອງໃດໜຶ່ງຂອງຍີ່ປຸ່ນ,ບໍ່ວ່າຈະເປັນ ຄາລາເຕ້ໂດ, ຢູໂດ, ໄອກິໂດ ຫຼື ເຄື່ອງຫຼິ້ນດົນຕີເມື່ອງຢ່າງພິນສາມສາຍ ຊ່າມິເຊັນ. ສະໄໝຢູ່ມະຫາວິທະຍາໄລ ຂ້ອຍເຄີຍໄປເບິ່ງຄອນເຊີດ ຊ່າມິເຊັນ ຂອງໝູ່ ແລະກໍ່ຍັງຖືກແນະນຳໃຫ້ຫຼິ້ນ ແຕ່ຂ້ອຍກໍ່ບໍ່ໄດ້ສົນໃຈຍັງເລີຍ. ຈົນໄດ້ເບິ່ງການສະແດງຄອນເຊີດຂອງວົງ ຊິກາລິ ຊ່າມິເຊັນ ອານມິຊິ ຢູ່ລາວ, ຍິ່ງເຮັດໃຫ້ຂ້ອຍກິນ ແໜ່ງ ທີ່ບໍ່ໄດ້ຮຽນຮູ້ການຫຼິ້ນຊ່າມິເຊັນຕອນຢູ່ມະຫາວິທະຍາໄລ. ໃນຈົດໝາຍຂ່າວສະບັບທີ5 ນີ້ ຈຶ່ງຂໍນຳແນະນຳໃຫ້ ຮູ້ກ່ຽວກັບ "ພິນສາມສາຍ ຊ່າມິເຊັນ".

ພິນສາມສາຍ ຊ່າມິເຊັນ ມີປະຫວັດທີ່ຍາວນານ, ເປັນເຄື່ອງດົນຕີທີ່ຫຼິ້ນຢູ່ເວທີກາງແຈ້ງ ຫຼິ້ນຢູ່ຫ້ອງໂອຊາສິກິ ຫລືຫຼິ້ນຢູ່ໂຮງມະຫໍລະສົບຕ່າງໆ.




ພິນສາມສາຍ ຊັນຊິນ ທີ່ເປັນດົນຕີພື້ນເມືອງຂອງໂອກິນາວາ ໄດ້ຖືກນຳເຂົ້າມາໃນຍີ່ປຸ່ນ ໃນຕອນທ້າຍຂອງສະຕະວັດທີ 16 ເຊິ່ງເປັນຍຸກທີ່ ຍີ່ປຸ່ນ ໄດ້ຂ້າມຜ່ານຈາກຍຸກສົງຄາມພາຍໃນປະເທດໄປຫາຍຸກລວມປະເທດ, ແລະໄດ້ມີການຫຼິ້ນ ຊັນຊິນ ຢູ່ຫຼາຍໆບ່ອນ ໃນຫຼາຍໆແບບ ຈົນເຮັດໃຫ້ ມີການພັດທະນາຮູບຮ່າງ ແລະກໍ່ ໃຫ້ເກີດເປັນ ຊ່າມິເຊັນ. ໄລຍະເລີ້ມຕົ້ນທີເອົາ ຊັນຊິນ ເຂົ້າມານຳໃຊ້ນັ້ນ, ກໍຈະມີຄວາມຄ້າຍ ຄືກັບ ຊັນຊິນ ຂອງເຂດອາຊີອາຄະເນທີນຳໃຊ້ ໜັງຂອງງູເຫຼືອມ, ແຕ່ວ່າໃນສະໄໝເອໂດ ເຊິ່ງ ເປັນຍຸກທີປິດປະເທດ ໄດ້ເຮັດໃຫ້ໜັງງູເຫຼືອມຂາດຕະຫຼາດໄປ ຈຶ່ງໄດ້ມີການຊອກຫາໜັງສັດອື່ນໆມາໃຊ້ແທນ.

(ອ່ານຕໍ່ໜ້າ 7)

**ເຈົ້າໄປເຮັດຫຍັງ ຢູ່ໃສເຖິງ 13ປີ? ບກ**

# ການປະກວດພາບຖ່າຍ (Photo Contest)



ໂດຍ: ເພັດມະນີວອນ ທັດຕະມະວົງ, ຜູ້ປະສານງານຫ້ອງການ ໄຈກາເຟ

ໃນທຸກໆປີຕັ້ງແຕ່ປີ2006 ເປັນຕົ້ນມາ JICafe ແລະ JICA ໄດ້ມີການຈັດການປະກວດຮູບພາບຂຶ້ນ.

ເຊິ່ງເປີດໂອກາດໃຫ້ຄົນລາວ ແລະຄົນຕ່າງປະເທດທຸກໆຄົນໄດ້ມີໂອກາດມີສ່ວນຮ່ວມດ້ວຍການສົ່ງຮູບພາບຖ່າຍເຂົ້າມາປະກວດ ເຊິ່ງແຕ່ລະປີກໍຈະມີຫົວຂໍ້ທີ່ແຕກຕ່າງກັນໄປ ແຕ່ຫົວຂໍ້ເລົ່ານັ້ນກໍ່ລ້ວນແຕ່ກ່ຽວກັບປະເທດລາວຂອງພວກເຮົາເອງ ເຊິ່ງຜົນງານທີ່ສົ່ງເຂົ້າມາ ກໍ່ຈະໄດ້ຖືກຈັດວາງສະແດງທີ່ JICafe ເພື່ອໃຫ້ທຸກຄົນສາມາດມາຊົມ ແລະ ໃຫ້ຄະແນນໄດ້. ນອກຈາກຈະມີລາງວັນພິເສດຫຼາກຫຼາຍລາງວັນຈາກ JICafe ແລະ JICA ແລ້ວ, ຮູບພາບທີ່ໄດ້ຮັບການຄັດເລືອກ ຍັງຈະຖືກຕີພິມໃນປະຕິທິນອີກດ້ວຍ ເຊິ່ງຈະຖືກແຈກຢາຍຕາມອົງການຈັດຕັ້ງທັງຂອງລາວ ແລະສາກົນ ທົ່ວນະຄອນຫຼວງວຽງຈັນ. ກິດຈະກຳນີ້ເຮັດໃຫ້ບຸກຄົນທົ່ວໄປ ມີສ່ວນຮ່ວມໃຈກິດຈະກຳຂອງອົງການຈັດຕັ້ງສາກົນ ເພື່ອເສີມຂະຫຍາຍການພົວພັນຂອງຄົນລາວກັບສາກົນໃຫ້ຫຼາຍຂຶ້ນ ແລະ ຍັງເປັນການເຜີຍແຜ່ວັດທະນະທຳ ການດຳລົງຊີວິດ ອັນດີງາມຂອງລາວເຮົາໃຫ້ສາກົນໄດ້ຮູ້ ໂດຍຜ່ານຮູບພາບຂອງບັນດາທ່ານອີກດ້ວຍ.

ສຳລັບຫົວຂໍ້ໃນແຕ່ລະປີທີ່ຜ່ານມາກໍ່ມີດັ່ງນີ້: ປີ2006 ວັດທະນະທຳລາວ, ປີ2007 ຄວາມເປັນລາວ, ປີ2008 ສິ່ງແວດລ້ອມລາວ ,ເຊິ່ງໃນປີ2009 ນີ້ ປະມານເດືອນ9 ຫາເດືອນ10 ກໍ່ຈະໄດ້ມີການເປີດຮັບຮູບພາບປະກວດຂຶ້ນຄືກັບທຸກໆປີ, ຫວັງວ່າບັນດາທ່ານທີ່ມັກຖ່າຍຮູບ ຫຼື ມີຮູບພາບທີ່ໜ້າປະທັບໃຈ ກໍ່ບໍ່ຄວນພາດໂອກາດດັ່ງກ່າວ ຫຼື ທ່ານທີ່ຍັງບໍ່ມີຮູບ ຖ້າມີໂອກາດກໍ່ຄວນຈະເກັບພາບທີ່ທ່ານປະທັບໃຈໄວ້, ເພື່ອສົ່ງເຂົ້າມາຮ່ວມປະກວດ. ການຄັດເລືອກແມ່ນມາຈາກການໂຫວດຂອງທຸກໆຄົນທີ່ມາຢ້ຽມຢາມ JICafe, ດັ່ງນັ້ນຈິ່ງຢາກຂໍເຊີນທຸກໆທ່ານ ມາຢ້ຽມຊົມ ແລະຊ່ວຍກັນໃຫ້ຄະແນນຮູບພາບທີ່ມາຈາກທຸກຂົງເຂດໃນປະເທດລາວ ທີ່ຈະຖືກວາງສະແດງຢູ່ທີ່ JICafe, ເຊິ່ງຈະມີຂຶ້ນຫຼັງຈາກຮັບຮູບພາບຄືປະມານ ເດືອນ10 ຫາເດືອນ11. ຈະເປັນຫົວຂໍ້ໃດນັ້ນ ທ່ານສາມາດຕິດຕາມການປະກວດໄດ້ຈາກ poster, ໜັງສືພິມ ຫຼືສອບຖາມໄດ້ໂດຍກົງນຳ JICafe.



ລາງວັນທີ3 ຂອງການປະກວດປີ2009 ພາຍໄຕ້ຫົວຂໍ້ "ສິ່ງແວດລ້ອມລາວ"

**ຈະມີທຳມະຊາດລົງເຫລືອໃຫ້ລູກຫລານ ກໍ່ຕໍ່ເມືອເຮົາຮັກສາໄວ້ເທົ້ານັ້ນ! ບກ**

<< ຮູບນີ້ຢູ່ໃສເນາະ ທ່ານ ບກ? ຢາກໄປເບິ່ງເດີ!

(ຕໍ່ຈາກໜ້າ 1, ການບໍລິຫານສະມາຄົມ ແລະ ການຈັດກິດຈະກຳໃນຕໍ່ໜ້າ )

ຂ້າພະເຈົ້າຢາກຂໍປຽບທຽບ ການເຮັດກິດຈະກຳຂອງສະມາຄົມ ຄືກັບການຫັນລານໂມງ (ໂມງຊະນິດເກົ່າໆພຸ້ນເດີ! ຢ່າສ່ ູສົ້ກັນວ່າ ໂມງດຽວນີ້ ໃຊ້ຖ່ານແລ້ວໃດ..), ຖ້າບໍ່ມີການຫັນລານ ໂມງກໍ່ບໍ່ເດີນ. ການຫັນລານ ເຮົາຈະມອບໃຫ້ຜູ້ໃດຜູ້ໜຶ່ງເຮັດ ມັນກໍ່ຄົງຈະບໍ່ເໝາະສົມ, ເພາະຫັນໄປ ດົນໄປກໍ່ເມື່ອຍ, ເອົາໄປເອົາມາ ເຊົາຫັນຊໍ້າ..

ໃນນາມຂອງຄະນະບໍລິຫານ ຢາກຂໍສະເໜີ ວິທີການໜຶ່ງໄວ້ຢູ່ທີ່ນີ້, ນັ້ນກໍ່ຄືການກຳນົດ ກິດຈະກຳຫລັກໄວ້ນຳກັນໃນເບື້ອງຕົ້ນ, ຖ້າບໍ່ໄດ້ເຮັດຫຍັງຫລາຍ ຢ່າງໜ້ອຍກໍ່ໃຫ້ເຮັດກິດຈະກຳຫລັກອັນນັ້ນ, ແລະທຸກຄົນກໍ່ຄວນຕື່ນຕົວເຂົ້າຮ່ວມນຳກັນ. ກິດຈະກຳຫລັກອັນໜຶ່ງ ທີ່ຂ້າພະເຈົ້າຢາກຍົກຂຶ້ນຢູ່ນີ້ ກໍ່ຄື "ງານພົບປະໃຫຍ່ປະຈຳປີ", ທຸກໆປີພວກເຮົາກໍ່ພະຍາຍາມຈັດ ແຕ່ສະມາຊິກກໍ່ບໍ່ທັນໄດ້ເຂົ້າຮ່ວມຫລາຍ ເທົ່າທີ່ຄວນ. ເປັນໄປໄດ້ບໍ່, ຖ້າພວກເຮົາກຳນົດ ວັນເວລາໄວ້ໂລດ ເຊັ່ນວ່າ ວັນເສົາ? ທີ 4? ຂອງເດືອນ5? (ຕົວຢ່າງ), ຖ້າກຳນົດໄວ້ແລ້ວ ການຈັດການເວລາຂອງທຸກຄົນ ກໍ່ຄົງຈະງ່າຍຂຶ້ນ, ການປະກອບສ່ວນໃນການຈັດງານ ກໍ່ຄົງສະດວກຂຶ້ນ. ສຳລັບງານພົບປະໃຫຍ່ປະຈຳປີ2009 ນີ້, ສຳລັບ ປີນີ້ຄິດວ່າທາງຄະນະບໍລິຫານ ຈະປະສານງານກັບຫລາຍໆພາກສ່ວນເພື່ອດຳເນີນໄປກ່ອນ, ພວກເຮົາອາດນຳໃຊ້ງານພົບປະດັ່ງກ່າວແລກປ່ຽນຄຳຄິດຄຳເຫັນ ແລະກຳນົດຫລາຍໆຢ່າງໄປນຳກັນ. ຫວັງວ່າສະມາຊິກທຸກຄົນ ຄວນສະຫລະເວລາ ເຂົ້າມາຮ່ວມນຳກັນ.

ທ້າຍສຸດນີ້, ໃນໂອກາດປີໃໝ່ນີ້, ຂໍອວຍໄຊໃຫ້ພອນ ແກ່ສະມາຊິກທຸກຄົນ ຈົ່ງມີສຸກຂະພາບເຂັ້ມແຂງ ແລະປະສົບຜົນສຳເລັດ ໃນໜ້າທີ່ວຽກງານ. ຂໍຂອບໃຈ.

ທ່ານ ປະທານ,

ປີນີ້ເຮັດຢູ່ໃສເນາະ?

ບກ ຢາກກິນ ຊູຊິ!



(ຕໍ່ຈາກໜ້າ 2, ພ້ອມກັນກ້າວໄປສູ່ອະນາຄົດ, ອະນຸພາກພື້ນແມ່ນ້ຳຂອງແລະຍີ່ປຸ່ນ)



ພະນະທ່ານນາຍົກລັດຖະມົນຕີ ບົວສອນ ບຸບຜາວັນ ໄດ້ພົບປະສອງຝ່າຍກັບພະນະທ່ານ ອາໂຊະ ຕາໂຣ ນາຍົກລັດຖະມົນຕີຍີ່ປຸ່ນ , ທີ່ໂຕກຽວ 20/05/2009

ການຮ່ວມມືແລກປ່ຽນນີ້ເກີດຂຶ້ນມາໄດ້ ກໍ່ຍ້ອນວ່າຍີ່ປຸ່ນແມ່ນໃຫ້ຄວາມສຳຄັນ ຕໍ່ພາກພື້ນແມ່ນ້ຳຂອງຢູ່ສະເໝີ ແລະ ກໍ່ຍັງສືບຕໍ່ມີບົດບາດຫຼາຍໆດ້ານໃນພາກພື້ນນີ້. ຍີ່ປຸ່ນໄດ້ສືບຕໍ່ພະຍາຍາມ ໃນການພັດທະນາເຊື່ອມໂຍງຕໍ່ "ພາກພື້ນແມ່ນ້ຳຂອງ - ພາກພື້ນແຫ່ງຄວາມຫວັງ ແລະ ການພັດທະນາ" ໂດຍການສົ່ງເສີມການຄ້າ ແລະ ການລົງທຶນ ແລະ ກິດຈະກຳອື່ນໆ ທີ່ເຊືອມໂຍງກັບພາກລັດ ແລະ ເອກະຊົນ. ເຊິ່ງດັ່ງກ່າວ ໄດ້ເຮັດໃຫ້ປະເທດມະຫາອຳນາດອື່ນໆ ໃນຂົງເຂດອາຊີນີ້ບໍ່ວ່າຈະເປັນຈີນ, ເກົາຫຼີໃຕ້, ອິນເດຍ ກໍ່ຢາກມີບົດບາດໃນພາກພື້ນນີ້ເຊັ່ນດຽວກັນ.

ສຳລັບປະເທດລາວນັ້ນ, "ປີແລກປ່ຽນລະຫວ່າງບັນດາປະເທດແມ່ນ້ຳຂອງ-ຍີ່ປຸ່ນ2009" ນີ້, ກໍ່ມີຫຼາຍໆກິດຈະກຳ ການແລກປ່ຽນທາງດ້ານເສດຖະກິດ, ວັດທະນະທຳ, ສົ່ງເສີມການທ່ອງທ່ຽວຕະຫຼອດປີ. ເຊັ່ນ : ການແຂ່ງຂັນເວົ້າພາສາຍີ່ປຸ່ນ, ການສະແດງກິລາປ້ອງກັນໂຕ (ຄາລາເຕ້ໂດ, ຢູໂດ, ໄອກິໂດ), ການສະແດງ ພິນສາມສາຍ ຊ່າມິເຊັນ ຂອງວົງຊຶກາລິຊ່າມິ ເຊັນ ອານມິຊຶ, ຄອນເສີດຂອງວົງ Gypsy Queen ແລະ ການສະແດງສິລະປະຂອງໂອກິນາວາ, ແລະ ອື່ນໆ. ທາງດ້ານການທ່ອງທ່ຽວ ກໍ່ມີການເປີດທ້ຽວບິນປະຖົມມະເລີກ ທ້ຽວ ບິນເມົາລຳທີ່ບິນກົງ ໂຕກຽວ-ນະຄອນຫລວງວຽງຈັນ ຂອງບໍລິສັດ JAL, ເຊິ່ງມັນໄດ້ເປັນການ ເປີດສັກກະລາດໃໝ່ ຂອງການບິນລະຫວ່າງ ລາວ-ຍີ່ປຸ່ນ ເຮັດໃຫ້ການເດີນທາງລະຫວ່າງສອງປະເທດສະດວກຍິ່ງຂຶ້ນ, ເຊິ່ງກໍ່ເປັນການສົ່ງເສີມການທ່ອງທ່ຽວລະຫວ່າງສອງປະເທດລາວ-ຍີ່ປຸ່ນ ເພີ້ມຍິ່ງໆຂຶ້ນ. ສຳລັບດ້ານເສດຖະກິດການຄ້າແລ້ວ, ເຖິງວ່າເສດຖະກິດຂອງໂລກ ແລະ ຂອງຍີ່ປຸ່ນຈະປະສົບພະວະວິກິດກໍ່ຕາມ ການລົງທຶນຂອງຍີ່ປຸ່ນໃນລາວກໍ່ມີທ່າອ່ຽງເພີ້ມຂຶ້ນ. ສິ່ງດັ່ງກ່າວ ແມ່ນຍ້ອນຄວາມຮ່ວມມືຂອງພາກລັດ-ເອກະຊົນ ເຊິ່ງສາມາດເຫັນໄດ້ຈະແຈ້ງວ່າ ໄດ້ມີການເຊັນສັນຍາສົ່ງເສີມການລົງທຶນລາວ-ຍີ່ປຸ່ນ ໃນເດືອນ1 ປີ2008, ແລະກໍ່ມີຜົນບັງຄັບໃຊ້ໃນເດືອນ8 ຂອງປີດຽວກັນ. ນອກຈາກນັ້ນ ການເປີດຂົວມິດ ຕະພາບແມ່ນ້ຳຂອງແຫ່ງທີ2 ສະຫວັນນະເຂດ-ມຸກດາຫານ ທີ່ໄດ້ການຊ່ວຍເຫຼືອຈາກຍີ່ປຸ່ນ ກໍ່ໄດ້ເຮັດໃຫ້ເສັ້ນທາງເຊື່ອມຕໍ່ເສດຖະກິດຕາເວັນອອກ -ຕາເວັນຕົກ ປະກົດເປັນຈິງ, ເຊິ່ງໄດ້ເຊື່ອມຕໍ່ລະຫວ່າງ ມໍລະມຽນ ປະເທດມຽນມາ ແລະ ດານັງ ປະເທດຫວຽດນາມ ໄດ້ເຮັດໃຫ້ປະສິດທິພາບການຂົນສົ່ງ ແລະ ຍົກຍ້າຍສິນຄ້າລະຫວ່າງ 4 ປະເທດ ແລະ ການຂົງສົ່ງສິນຄ້າໄປຍີ່ປຸ່ນ ກໍ່ຄືປະເທດອື່ນໆໄດ້ຮັບການປັບປຸງໃຫ້ດີຂຶ້ນ.

ນອກຈາກນີ້, ປີ2010 ເຊິ່ງເປັນປີທີ່ມີການສະຫຼອງເຫດການສຳຄັນທາງປະຫວັດສາດຂອງລາວແລ້ວ, ກໍ່ຍັງເປັນປີຄົບຮອບ 55ປີ ແຫ່ງການສ້າງຕັ້ງສາຍພົນພັນການທູດລະຫວ່າງລາວ-ຍີ່ປຸ່ນ. ເຊິ່ງກໍ່ຈະມີກິດຈະກຳຫຼາຍໆຢ່າງທີ່ຈະເກີດຂຶ້ນ, ເຊິ່ງຈະເປັນການສົ່ງເສີມຄວາມສຳພັນອັນດີງາມລະຫວ່າງສອງຊາດ ລາວ-ຍີ່ປຸ່ນ ແລະ ການຮ່ວມມື ໃຫ້ແໜ້ນແຟ້ນຍິ່ງຂຶ້ນ.

(ຕໍ່ຈາກຫນ້າ 3, ວຽກງານການປະກັນຄຸນະພາບການສຶກສາ)

ບາດກ້າວທ□າອິດຂອງການປະກັນຄຸນະພາບ ການສຶກສາ ແມ່ນການສ້າງມາດຖານຂອງຄຸນະ ພາບການສຶກສາ. ມາດຖານຈະເປັນຕົວບົ່ງ ບອກວ່າ ຄຸນະພາບການສຶກສາຢູ່ໃນລະດັບໃດ, ມີຈຸດໃດທີ່ໄດ້ມາດຖານແລ້ວ ແລະຈຸດໃດທີ່ຍັງ ຕ້ອງ ການການປັບປຸງໃຫ້ດີຂື້ນ. ໂດຍມາດ ຖານຈະເປັນມາດຖານຕໍ່າສຸດ (minimum standard) ເພາະວ່າ ເພື່ອຮັບປະກັນຄຸນະ ພາບໃນລະດັບໃດຫນຶ່ງ ແຕ່ບໍ່ໃຫ້ເປັນການຈໍາ ກັດຄວາມຫລາກຫລາຍທາງດ້ານການສຶກສາ. ມາດຖານການສຶກສາ ໃນແຕ່ລະສາຍຂອງການ ສຶກສາ (ສາຍກ່ອນໄວຮຽນ, ສາຍສາມັນ, ສາຍ ວິຊາຊີບ, ສາຍຊັ້ນສູງ ແລະ ອື່ນໆ) ຈະມີເນື້ອ ໃນແຕກຕ່າງກັນ ແລ້ວແຕ່ຈຸດປະສົງ ແລະ ຄວາມຈໍາເປັນຂອງການສຶກສາໃນແຕ່ລະຂັ້ນ, ເຊິ່ງຈະຖືກກໍານົດໂດຍຜູ້ມີສ່ວນຮ່ວມທັງຫມົດ. ຫລັງຈາກໄດ້ມາດຖານແລ້ວ ຈະມີບາດ ກ້າວ ການປະເມີນຄຸນະພາບພາຍໃນ ໂດຍສະຖານ ສຶກສາເອງ ຫລືຫນ່ວຍງານຕົ້ນສັງກັດ (ສຶກສາເມືອງ, ສຶກສາແຂວງ, ກົມວິຊາການກ່ຽວຂ້ອງ) ແລະນໍາເອົາຜົນການປະເມີນມາຫມູນໃຊ້ເພື່ອປັບປຸງ ແລະຍົກສູງຄຸນະພາບໃຫ້ສູງຂື້ນ. ຮອບວຽນຂອງວຽກງານນີ້ ຈະຖືກເອີ້ນວ່າການປະກັນຄຸນະພາບພາຍໃນ, ຫມາຍວ່າ, ທາງສະຖານສຶກສາເອງ ຈະກະທໍາເພື່ອສ້າງຄວາມຫມັ້ນໃຈໃຫ້ກັບຜູ້ຮຽນ, ຜູ້ປົກຄອງ, ສັງຄົມ ແລະລັດຖະບານວ່າ ສະຖານສຶກສາຂອງຕົນ ສາມາດສະຫນອງການສຶກສາທີ່ມີຄຸນະພາບ. ຕໍ່ຈາກນັ້ນ, ເພື່ອເປັນການຢັ້ງຢືນວ່າ ການປະເມີນພາຍໃນມີຄວາມຖືກຕ້ອງແທ້ ໂດຍອີງໃສ່ຜົນການປະເມີນພາຍໃນ ຈະມີຂະບວນການປະເມີນພາຍນອກອີກເທື່ອຫນຶ່ງ, ໂດຍຜູ້ປະເມີນພາຍນອກ ຕ້ອງແມ່ນຜູ້ທີ່ມີເຂົ້າໃຈດີຕໍ່ບັນຫາ ແລະໄດ້ຮັບການຍອມຮັບຈາກສັງຄົມ, ໂດຍການປະເມີນພາຍນອກນີ້ ຈະນໍາໄປເຖິງບາດກ້າວຂອງການຮັບຮອງ ຫລືຢັ້ງຢືນຄຸນະພາບການສຶກສາ.

ທັງຫມົດຂະບວນການດັ່ງກ່າວນີ້ແມ່ນເປັນລະບົບການປະກັນຄຸນະພາບການສຶກສາ, ມັນເຮັດໃຫ້ທຸກຄົນເຫັນນໍາກັນຈະແຈ້ງວ່າ ຄຸນະພາບ ທີ່ພວກເຮົາຕ້ອງການແມ່ນເປັນແບບໃດກັນແທ້, ໃນສະພາບປະຈຸບັນ ຄຸນະພາບການສຶກສາເຮົາ ມີຈຸດອ່ອນແນວໃດ ມີຈຸດແຂງແນວໃດ, ຄວນປັບປຸງຈຸດອ່ອນແນວໃດ ແລະເສີມສ້າງຈຸດແຂງແນວໃດ ເພື່ອເປັນການຮັບປະກັນກັບພໍ່ແມ່ພີ່ນ້ອງປະຊາຊົນ, ຫົວຫນ່ວຍທຸລະກິດ ແລະອົງ ການຈັດຕັ້ງຕ່າງໆ ເວົ້າລວມກໍ່ຄືສັງຄົມ ໃຫ້ຫມັ້ນໃຈ ແລະເຊື່ອຫມັ້ນໄດ້ວ່າ ລູກຫລານທຸກຄົນຈະ ໄດ້ຮັບການສຶກສາທີ່ມີຄຸນະພາບ ແລະກາຍເປັນຊັບພະຍາກອນທີ່ມີຄຸນະພາບຂອງສັງຄົມ.

ທ່ານຮອງສູນ ຢ່າລືມບອກໃຫ້ຮູ້ແດ່ວ່າ
ໂຮງຮຽນໃດມີຄຸນະພາບດີ ບກ ກໍ່ຢາກໄປ
ຮຽນນໍາຄື່ກັນ. ບກ ເຄີຍແຕ່ໄດ້ຍິນQC、
Quality Control ຂອງບໍລິສັດ ໂຮງງານ.
ໂອກາດຫນ້າຂໍບົດຮຽນນໍາແດ່!

(ຕໍ່ຈາກຫນ້າ 5, ພິນສາມສາຍ ຊ່າມິເຊັນ)

ຊ່າມິເຊັນ ປະກອບດ້ວຍ ໄມ້ຄານພິນ, ໜ່ວຍພິນ, ຄັນປັບສາຍພິນ, ສາຍພິນ ແລະ ປິກ(ເກັດດີດພິນສາມສາຍ). ອີງໃສ່ຄວາມໜາຂອງໄມ້ຄານພິນ ແລະ ຄວາມໃຫ່ຍຂອງໜ່ວຍພິນ ຈຶ່ງໄດ້ຈັດເປັນ 3 ປະເພດຄື ພິໂຕຊະໂອະຊ່າມິເຊັນ, ຈຶຊະໂອະຊ່າມິເຊັນ, ໂຮໂຊຊະໂອະຊ່າມິເຊັນ. ນອກຈາກນີ້ອີງໃສ່ປະເພດຂອງການຫຼີ້ນ ແລະ ວິທີຫຼີ້ນຕ່າງໆ ຈຶ່ງເຮັດໃຫ້ວັດຖຸດິບ, ໂຄງສ້າງ, ປິກ ມີຄວາມແຕກຕ່າງກັນໄປ,ແລະຍ້ອນຄວາມແຕກຕ່າງນີ້ ຈຶ່ງເກີດໃຫ້ມີລັກສະນະພິເສດຂອງສຽງ ແລະຈັງວະ. ຍ້ອນວ່າ ຊ່າມິເຊັນ ມີພຽງແຕ່ສາຍພິນສາມສາຍທີ່ມີຄວາມແຕກຕ່າງກັນ ແລະຍັງບໍ່ມີເຝັດ(ເຫຼັກຂັ້ນປ້ອງສຽງ) ຄືກັບກີຕາທົ່ວໄປ, ຈຶ່ງມີເຮັດໃຫ້ການຈັບຈຸດຕ່າງໆ ກໍ່ຄືການຫລີ້ນ ຊ່າມິເຊັນ ຕ້ອງໄດ້ໄຊ້ຄວາມພະຍາຍາມ ແລະ ການຝຶກຝົນຢ່າງດີ. ໃນປະຈຸບັນ ຊ່າມິເຊັນ ໄດ້ຖືກຫັກແບ່ງເປັນ 3 ສວ່ນ ເພື່ອເຮັດໃຫ້ສະດວກໃນການພົກພາ ເຊິ່ງເອີ້ນວ່າ “ ມິຊືໂອເລ” ແລະ ຍັງມີລວດລາຍຕາມຍຸກສະໄໝ.

ໃນປະຈຸບັນ, ຊືກາລຶຊ່າມິເຊັນ ໄດ້ກາຍເປັນດົນຕີພື້ນເມືອງທີໄດ້ຮັບຄວາມນິຍົມຫຼາຍທີ່ສຸດຢູ່ໃນຍີ່ປຸ່ນ. ຊືກາລຶຊ່າມິເຊັນ ແມ່ນ ຊ່າມິເຊັນ ທີໃຊ້ສະແດງກັບການສະແດງດົນຕີພື້ນເມື່ອງຂອງເຂດຊືກາລຶທີ່ຢູ່ພາກ ເໜືອຂອງຍີ່ປຸ່ນ, ຍ້ອນໄດ້ຮັບຜົນສະທ້ອນທາງທໍາມະຊາດຂອງ ເຂດຊືກາລຶ ທີ່ໜາວເຢັນ ຈຶ່ງເຮັດໃຫ້ເກີດມີວິທີຫຼີ້ນພິນທີເຂັ້ມແຂງ. ຊ່າມິເຊັນ ໄດ້ຖືກນໍາໃຊ້ເຂົ້າຮວ່ມ ແລະເປັນດົນຕີທີ່ຊວ່ຍການຟ້ອນ ແລະການຮ້ອງເພງ ໃນງານບຸນ ແລະງານລ້ຽງສະຫຼອງຕ່າງໆ.



ສໍາລັບ ບກ ເອງແລ້ວ
ເປັນຄົນທີ່ບໍ່ມີພອນສະຫວັນທາງດ້ານນີ້
ແຕ່ມັກຟັງດົນຕີ ໂດຍສະເພາະ ເປຍອາໂນ
ແລະ ກອງຍີ່ປຸ່ນ ວະໄດໂກ!

(ຕໍ່ຈາກໜ້າ 4, ປະເພນີລາວທີ່ຄວນຮູ້)

**ຄອງສິບສີ່**

1. ເມື່ອພືດພົນເຂົ້າກ່ໍາ, ໝາກໄມ້ ເປັນພວງ, ເປັນໝາກ ຕົນຢ່າຟ້າວກິນກ່ອນ, ໃຫ້ເອົາ ໄປທານແກ່ຜູ້ມີສິນກິນກ່ອນ ແລ້ວຕົນຈຶ່ງກິພາຍລຸນ

2. ຢ່າໂລບລ່າຍຕາຊັ່ງ, ຢ່າຈ່າຍເງິນແດງ ແປງເງິນຄວ້າງ ແລະກ່າວຄໍາຫຍາບຊ້າກ້າແຂງຕໍ່ກັນ

3. ໃຫ້ພາກັນເຮັດຮົ້ວ ເຮັດຕາຍອ້ອມວັດ, ອ້ອມເຮືອນ ອ້ອມບ້ານ, ແລ້ວປຸກຫໍບູຊາເທວະດາ ໄວ້ສີ່ແຈອ້ອມເຮືອນ

4. ກ່ອນຈະຂຶ້ນເຮືອນ ໃຫ້ເອົານ້ໍາລ້າງຕີນທັງສອງເບື້ອງສາກ່ອນ

5. ຮອດວັນ ສິນເຈັດ, ສິນແປດ, ສິນສິບສີ່, ສິນສິບຫ້າຄ່ໍາ ໃຫ້ສົມມາກ້ອນເສົ້າ, ແມ່ຄີໄຟ, ຂັ້ນໄດ, ປະຕູເຮືອນທີ່ຕົນຢູ່ອາໄສ

6. ເມື່ອຈະເຂົ້າໄປນ່ອນນອນ ໃຫ້ເອົານ້ໍາລ້າງຕີນສາມີເສຍກ່ອນ

7. ຮອດມື້ວັນສິນ ໃຫ້ເອົາດອກໄມ້, ທູບທຽນ ສົມມາສາມີ, ພໍ່ແມ່ແລະເຖົ້າແກ່ລຸງຕາຂອງຕົນ. ເຖິງວັນ ອຸໂບສົດ (ວັນສິນໃຫຍ່) ໃຫ້ແຕ່ງຂັນດອກໄມ້ໄປເຄນພຣະສົງອົງຄະ ເຈົ້າ

8. ເຖິງວັນສິນດັບ ສິນເພັງ ໃຫ້ນິມົນພຣະສົງອົງຄະເຈົ້າ ມາສູດມຸງຄຸນເຮືອນ ແລະ ທໍາບຸນໃສ່ບາດ, ຖວາຍສັງຄະທານ

9. ເມື່ອພິຊຸສົງມາບິນທະບາດ ຢ່າໃຫ້ເພິ່ນຄອຍຖ້າ, ໃສ່ບາດ ບໍ່ໃຫ້ມີຕີນຊູນບາດ ແລະແຕະຕ້ອງເນື້ອກາຍເພິ່ນ. ຍາມໃສ່ບາດ ບໍ່ໃຫ້ຖືເກີບ, ໝວກ, ຄັນຮົ່ມ, ບໍ່ເອົາແພ ປົກຫົວ, ບໍ່ອູ້ມລູກຜູກດາ ແລະ ຖືອາວຸດໃດໆ

10. ເມື່ອພິຊຸສົງ ອອກຈາກເຂົ້າກໍາແລ້ວ ໃຫ້ເອົາຂັນດອກໄມ້, ທູບທຽນ ແລະ ເຄື່ອງອັດຖະບໍລິຄານ (ເຄື່ອງສະເພາະສົງ) ໄປຖວາຍ

11. ເມື່ອເຫັນພຣະພິຊຸສົງອົງຄະເຈົ້າກາຍມາ ໃຫ້ນັ່ງລົງ ແລະ ຍໍມືໄຫວ້, ແລ້ວຈຶ່ງເຈລະຈາເວົ້ານໍາເພິ່ນ ຕາມສົມຄວນ

12. ຢ່າຍ່າງຢຽບເງົາເຈົ້າພິຊຸສາມະເນນ

13. ຢ່າເອົາອາຫານເຫຼືອນທີ່ຕົນກິນແລ້ວ ໄປທານແກ່ພຣະສົງເປັນອັນຂາດ ພ້ອມກັນນັ້ນ ກໍ່ບໍ່ຄວນເອົາໄປໄວ້ໃຫ້ສາມີແຫ່ງຕົນກິນ

14. ຊາຍ—ຍິງ ຢ່າເສບສົມການມະຄຸນກັນ ໃນວັນ ສິນ, ເຂົ້າພັນສາ, ອອກພັນສາ ແລະ ວັນມະຫາສົງການຂຶ້ນປີໃໝ່

**ເຮືອນສາມ**

ໂດຍສະເພາະແມ່ຍິງ ຕ້ອງໄດ້ທໍາຄວາມສະອາດ ສາມເຮືອນ ດັ່ງລຸ່ມນີ:

1. ເຮືອນນອນ
2. ເຮືອນຄົວ
3. ເຮືອນພົມ

ແລະ ຕ້ອງມີ **ນ້ໍາສີ່** ເພື່ອໃຊ້ໄວ້ຮັບແຂກທີ່ມາແວ່ບ້ານ

1. ນ້ໍາໃຈ
2. ນ້ໍາດື່ມ
3. ນ້ໍາໃຊ້
4. ນ້ໍາບອກປູນ (ສະໄໝກ່ອນ ຜູ້ເຖົ້າ ຜູ້ແກ່ ນິຍົມຄ້ຽວໝາກ, ຕ້ອງໃຊ້ປູນເປັນເຄື່ອງປະກອບ ທີ່ສໍາຄັນ ຂອງຄໍາໝາກ)



ຄວາມງົດງາມທີ່ເປັນເອກະລັກຂອງຜູ່ຍິງລາວ ຢ່າງນຶ່ງກໍ່ຄືການນຸ່ງສິ້ນ! ບກ

# ປະຫວັດຫຍໍ້ຂອງຄະນະປະທານ

ຄະນະປະທານຊຸດຕໍ່ໄປ ຂໍໃຫ້ມີເອື້ອຍນ້ອງຍິງແດ່!

ພາຍຫລັງຈາກຄະນະປະທານຊຸດໃໝ່ ຊຸດທີ3 ໄດ້ຮັບການເລືອກຕັ້ງ ແລະແຕ່ງຕັ້ງ, ແລະພ້ອມດຽວກັນກໍ່ເລີ່ມບໍລິຫານ JAOL ໂດຍການແຕ່ງຕັ້ງຄະນະບໍລິຫານຊຸດໃໝ່ ຊຸດທີ3 ຂຶ້ນ. ຈາກການບໍລິຫານເກືອບປີນຶ່ງໄດ້ເຮັດໃຫ້ມີການປ່ຽນແປງໃນໂຕສະມາຄົມ ອາດຈະເບິ່ງຄ້າຍກັບວ່າຈະບໍ່ຄ່ອຍ ເຮັດກິດຈະກໍາປານໃດກໍ່ຕາມ, ກໍ່ຍັງມີຜົນງານຫລາຍໆດ້ານທີ່ພົ້ນເດັ່ນ.

ໃນຈົດໝາຍຂ່າວສະບັບນີ້ ຈະມາແນະນໍາປະຫວັດໂດຍຫຍໍ້ ຂອງປະທານ ແລະ ຮອງປະທານກ່ອນ. ຫລາຍໆຄົນກໍ່ອາດຈະຄຸ້ນໜ້າຄຸ້ນຕາກັນແລ້ວກໍ່ຕາມ, ເຖິງວ່າຈະມີຄົນທີ່ມັກຮ້າຍ ແລະ ກົງກັນຂ້າມທີ່ມີຄົນມັກຟັງຄວາມສະມາຊິກກໍ່ຕາມ, ສິ່ງສໍາຄັນທຸກໆຄົນມີສ່ວນຮ່ວມ ແລະ ມີສິດເທົ່າທຽມກັນໃນການບໍລິຫານ JAOL. ຂໍໃຫ້ຮ່ວມກັນເຮັດ ຮ່ວມກັນສ້າງ!

| ຊື່ແລະນາມສະກຸນ | ຕໍາແໜ່ງ | ປີຢູ່ຍີ່ປຸ່ນ | ທຶນ | ມະຫາວິທະຍາໄລ | ລະດັບການສຶກສາສູງສຸດ |
|---|---|---|---|---|---|
| ປັນຍາ ຈັນທະວົງ | ປະທານ | 1998-2003 | AYF | The University of Nagaoka | Master of Electrical Engineering |
| ບັນດາໄຊ ລໍວັນໄຊ | ຮອງປະທານ | 1994-2007 | MEXT | The University of Tsukuba | Master of Information Engineering |
| ດຣ ບຸນລ້ອນ ດ້ວງເງິນ | ຮອງປະທານ | 2000-2005 | JICA | National Graduate Institute for Policy Studies | Ph.D of Economic Development |

AFY : ທຶນການສຶກສາ Asian Youth Fellowship
MEXT : ທຶນການສຶກສາລັດຖະບານຍີ່ປຸ່ນ
JICA : ທຶນການສຶກສາ ຂອງ JICA

# ປະມວນຮູບພາບກິດຈະກຳຂອງJAOL

## ຜົນງານຈຳນວນໜຶ່ງຂອງການບໍລິຫານ ຂອງຄະນະບໍລິຫານຊຸດໃໝ່ ຊຸດທີ3

ໃນຈົດໝາຍຂ່າວສະບັບນີ້ ກະວ່າຈະເອົາຮູບພາບແລະ ຜົນງານຕ່າງໆ ຂອງJAOL ຫຼັງຈາກການບໍລິຫານງານຂອງຄະນະຊຸດໃໝ່ມາໃຫ້ຮັບຮູ້. ແຕ່ຍ້ອນສະພາບໃນຕົວ ແລະ ນອກຕົວ, ຂໍສະຫຼູບຫຍໍ້ ຜົນງານ ກິດຈະກຳເຊັ່ນ: ການບັນລະຍາຍແນະນຳກ່ຽວກັບ JAOL ແລະ ການສຶກສາຢູ່ຍີ່ປຸ່ນ ໃນງານ Study in Japan Pair2008 (06/08), ການແນະນຳ JAOL ໃຫ້ນັກສຶກສາJDS (07/08), ການຄັດເລືອກ ແລະຈັດສົ່ງນັກຮຽນ ມ4,5 ໄປໂຮມສະເຕຢູ່ຍີ່ປຸ່ນ ພາຍໃຕ້ ASJA Junior Program (07/08, 10/08), ການຂາຍເຄື່ອງໃນງານມະຫາກຳຮູບເງົາກາຕູນຍີ່ປຸ່ນ (09/08), ເປັນເຈົ້າພາບຈັດງານເຕະບານມິດຕະພາບ ອະດີດນັກສຶກສາລາວຈາກ 5 ປະເທດ (11/08) ທວງດນາມ-ຈີນ-ອະດີດສະຫະພາບໂຊຫວຽດ-ໄທ-ຍີ່ປຸ່ນ, ການເຮັດປະຖົມນິເທດກັບໃຫ້ແກ່ນັກສຶກສາທີ່ຈະໄປຍີ່ປຸ່ນ (03/09), ການປະກອບສ່ວນຈັດງານການແຂ່ງຂັນເວົ້າພາສາຍີ່ປຸ່ນ (03/09), ການເຕະບານມິດຕະພາບກັບ ອະດີດນັກສຶກສາAIT, ພະແນກໂຄງການ ບໍລິສັດ ETL, ແລະ ກໍ່ຍັງມີກິດຈະກຳອື່ນໆ.

ການສົ່ງນ້ອງນັກຮຽນ ມ 4,5 ໄປໂຮມສະເຕຢູ່ຍີ່ປຸ່ນ ເປັນເວລາ 2 ອາທິດ ພາຍໃຕ້ ASJA Junior Program.

*ປີນີ້ກໍ່ມີໃດ໋ ກາງເດືອນ7 ຈະປະກາດໃຫ້ຮູ້*



# ເດັກນ້ອຍລາວເຂົ້າຮ່ວມກິດຈະກຳວັດທະນະທຳທີ່ປະເທດຍີ່ປຸ່ນ

★ ເດັກນ້ອຍລາວ ອາຍຸບໍ່ເກີນ 15 ປີ ທີ່ຄັດເລືອກຈາກໂຮງຮຽນມັດທະຍົມຕອນປາຍ ໃນນະຄອນຫຼວງວຽງຈັນ ຈຳນວນ 6 ຄົນ ໄດ້ເດີນທາງໄປເຂົ້າຮ່ວມກິດຈະກຳວັດທະນະທຳ ທີ່ປະເທດຍີ່ປຸ່ນ ໃນວັນທີ 15 ຕຸລາ 2008 ຜ່ານມານີ້ ໂດຍການອຸປະຖຳຂອງສະມາຄົມ ASIA JAPAN ALUMNI INTERNATIONAL (ASJA)

ສະມາຄົມ ASJA ຖືກສ້າງຕັ້ງຂຶ້ນເມື່ອປີ 2000 ມີສະມາຊິກຢູ່ 9 ປະເທດ ຄື: ຍີ່ປຸ່ນ ອິນໂດເນເຊຍ ສິງກະໂປ ມຽນມາ ມາເລເຊຍ ກຳປູເຈຍ ຟີລິບປິນ ໄທ ແລະ ຫວຽດນາມ ສ່ວນລາວແມ່ນຈະເຂົ້າຮ່ວມເປັນສະມາຊິກຂອງ ASJA ໃນອະນາຄົດອັນໃກ້ໆນີ້.

ສະມາຄົມ JAPAN ALUMNI OF LAOS (JAOL) ສະມາຄົມອະດີດນັກສຶກສາລາວ ຮຽນຢູ່ປະເທດຍີ່ປຸ່ນ ເຊິ່ງໄດ້ຮັບການສ້າງຕັ້ງຂຶ້ນໃໝ່ ໄດ້ເປັນຜູ້ປະສານງານກັບ ASJA ຄັດເລືອກເອົາເດັກນ້ອຍລາວ ເຂົ້າຮ່ວມກິດຈະກຳວັດທະນະທຳຢູ່ເມືອງ Toyota-City, Aichi Japan

ອ່ານຕໍ່ໜ້າ 6

*ປີນີ້ໃຜຢາກໄປແດ່ ຊົ້ມືຂຶ້ນ! ບາ ກໍ່ຢາກໄປຢູ່ໃດ໋ ແຕ່ ອາຍຸ?*

ການຂາຍເຄື່ອງໃນງານມະຫາກຳຮູບເງົາກາຕູນຍີ່ປຸ່ນ 2008 ຢູ່ເດີ່ນຫໍວັດທະນາທຳ






ການແຂ່ງຂັນເວົ້າພາສາຍີ່ປຸ່ນ 2009

*ປີຕໍ່ໄປ ໃຜຢາກເປັນພິທີກອນ? ບາ ກໍ່ຢາກເປັນຢູ່ໃດ໋!*

ງານລ້ຽງຂອບໃຈສະມາຊິກໃນການປະກອບສ່ວນເຮັດໃຫ້ການເຕະບານມິດຕະພາບຂອງອະດີດນັກສຶກສາລາວຈາກ 5 ປະເທດ

*ບັນຍາ ແລະ ຈັນ ກຳລັງແຂ່ງກັນຮ້ອງເພັງ. ຜູ້ອື່ນກໍ່ຢາກຮ້ອງຄືກັນໄດ໋! ບາ*



# ກະດານຂ່າວJAOL ຢູ່ LJC

ໂດຍ: ບັນດາໄຊ ລໍອັນໄຊ, ຮອງປະທານ JAOL

ຖ້າທ່ານມີໂອກາດໄປ ສູນຮ່ວມມືດ້ານຊັບພະຍາກອນມະນຸດລາວ-ຍີ່ປຸ່ນ (LJC) ທ່ານຈະສາມາດເຫັນກະດານຂ່າວJAOL ຢູ່ຂ້າງທາງເຂົ້າເບື້ອງຂວາ. ກະດານຂ່າວນີ້ ເກີດມາຈາກຄວາມພະຍາຍາມຂອງສະມາຊິກທຸກໆຄົນ ເພື່ອໃຫ້ນັກຮຽນນັກສຶກສາຢູ່ວິທະຍາເຂດດົງໂດກກໍ່ຄືຄົນທົ່ວໄປ ໄດ້ຮູ້ຈັກJAOL ແລະ ກິດຈະກໍາຂອງ JAOL.

ກະດານຂ່າວນີ້, ເທື່ອທໍາອິດແມ່ນເລີ້ມມາຈາກການວາງສະແດງກ່ຽວກັບ JAOL ໃນງານມະຫາກໍາຮູບເງົາຍີ່ປຸ່ນ2007 ຢູ່ທີ່ສູນການຄ້າລາວໄອເຕັກ. ຍ້ອນການຮ່ວມມືຫຼາຍໆຝ່າຍ ແລະເບິ່ງເຫັນໄດ້ຄວາມສໍາຄັນຂອງ JAOL, ທາງ LJC ໄດ້ຕົກລົງທີ່ຈະເອົາແຜ່ນວາງສະແດງດັ່ງກ່າວ ວາງສະແດງໄວ້ຢູ່ LJC ເປັນເວລາ 3ເດືອນ. ແຕ່ຍ້ອນໄດ້ຮັບຄວາມສົນໃຈຈາກນັກຮຽນນັກສຶກສາ ຈຶ່ງໄດ້ເຮັດໃຫ້ແຜ່ນວາງສະແດງດັ່ງກ່າວ ເກີດເປັນກະດານຂ່າວJAOL. ເຊິ່ງເປັນການນໍາສະເໜີJAOL, ກິດຈະກໍາຂອງJAOL ແລະ ຍັງມີການນໍາສະເໜີກ່ຽວກັບການສຶກສາຢູ່ຍີ່ປຸ່ນ ໂດຍສະເພາະແນະນໍາກ່ຽວກັບສະມາ ຄົມນັກສຶກສາລາວຢູ່ຍີ່ປຸ່ນ LSAJ ແລະ ຮູບພາບຕ່າງໆຂອງການດໍາລົງຊີວິດຢູ່ຍີ່ປຸ່ນ, ສິ່ງເຫລົ່ານີ້ຈະເປັນການກະຕຸ້ນໃຫ້ນັກຮຽນນັກສຶກສາລາວ ມີຄວາມຢາກຮູ້ຢາກໄປສຶກສາຢູ່ຍີ່ປຸ່ນ ແລະ ກໍ່ເປັນຂົວຕໍ່ເພື່ອໃຫ້ນັກຮຽນນັກສຶກສາລາວໄດ້ຮັບໂອກາດການສຶກຢູ່ຍີ່ປຸ່ນຫຼາຍໆຂື້ນ




ໃນນາມຄະນະບໍລິຫານການງານ JAOL ກໍ່ຄືສະມາຊິກທຸກໆຄົນ ຂໍຂອບໃຈມາຍັງ LJC ທີ່ໄດ້ໃຫ້ການສະໜັບສະໜູນໃຫ້ເກີດມີກະດານຂ່າວນີ້, ແລະ ຍັງໄດ້ປົກປັກຮັກສາຢ່າງດີຕະຫລອດມາ. JAOL ກໍ່ຈະພະຍາຍາມປັບປຸງຂໍ້ມູນ ແລະ ຫາສິ່ງດີໆມາປະກາດ ແລະ ວາງສະແດງ. ຫວັງວ່າກະດານຂ່າວນີ້ ຈະເປັນການປະກອບສ່ວນເຂົ້າໃນການສົ່ງເສີມມິດຕະພາບຄວາມຮ່ວມມື ລາວ-ຍີ່ປຸ່ນ ໃຫ້ດີຍິ່ງຂື້ນ.

# ຢາກໃຫ້ຈົດໝາຍຂ່າວເປັນ ແບບໃດ?

ໂດຍ: ບັນດາໄຊ ລໍອັນໄຊ, ບກ ຕ່າງໜ້າຄະນະຈັດພິມ ຈົດໝາຍຂ່າວ ສະບັບທີ5

ໃນຊ່ວງການຂຽນຈົດໝາຍຂ່າວສະບັບນີ້ ຂ້າພະເຈົ້າຮູ້ສຶກວ່າ ຮອດເວລາແລ້ວທີ່ຄວນມີການປັບປຸງການເຮັດຈົດໝາຍຂ່າວນີ້.

ດັ່ງທີ່ໄດ້ມີການກ່າວເຖິງໃນສະບັບກ່ອນແລ້ວກໍ່ຕາມ ພວກເຮົາມາລອງຄິດເບິ່ງວ່າຄວນຈະເຮັດແນວໃດ ໃຫ້ທຸກໆຄົນມີສ່ວນຮ່ວມ ໃນຈົດໝາຍຂ່າວນີ້ ແລະເຮັດໃຫ້ເປັນບ່ອນສື່ສານລະຫວ່າງສະມາຊິກ ກໍ່ຄືເປັນບ່ອນເກັບກໍາຂໍ້ມູນຂ່າວສານຕ່າງໆ. ໃນເທື່ອນີ້ຂ້າພະເຈົ້າຈຶ່ງມີແນວຄວາມຄິດມາສະເໜີ, ຄືການເຮັດຈົດໝາຍຂ່າວທາງອິນເຕີເນັດ ຫລື E-newsletter, ຄິດວ່າເປັນທຸກຄົນຄົງເຂົ້າໃຈຄວາມໝາຍໃນໂຕມັນເອງ.

E-newsletter ຈະເໝາະສົມກັບຍຸກສະໄໝ, ອີກຢ່າງໜຶ່ງກໍ່ເປັນການປະຫຍັດງົບປະມານ ເຊິ່ງປະຈຸບັນນີ້ ຍັງອາໃສການສະໜັບສະໜູນຈາກທາງສະຖານທູດຍີ່ປຸ່ນ.ສໍາລັບໄລຍະເວລາຂອງການອອກສູ່ສະມາຊິກ ອາດຈະເລີ່ມຕົ້ນໂດຍເປັນປະຈໍາໄຕມາດ ທຸກໆ 3ເດື່ອນ, ຈາກນັ້ນຄ່ອຍກ້າວເປັນປະຈໍາທຸກໆ 2 ເດື່ອນ, 1ເດື່ອນ, 2ອາທິດ ແລະ ກ້າວເປັນປະຈໍາອາທິດ. ສໍາລັບເນື້ອໃນກໍ່ຂື້ນກັບສະພາບໂຕຈິງ, ແຕ່ຄວາມແບ່ງເປັນໝວດໄວ້ຕົວຢ່າງເຊັ່ນ :

-ໝວດຂ່າວ

-ໝວດບົດສະເໜີ / ບົດຄວາມ

-ໝວດລາຍງານ / ບົດສໍາພາດ

-ໝວດກິລາ / ບັນເທີງ

-ໝວດວິທະຍາສາດ, ເຕັກໂນໂລຊີ / IT

-ໝວດສະພາບແວດລ້ອມ

-ໝວດເສດຖະກິດ ການເງິນ ທຸລະກິດ

-ພາສາສາດ

-ແຈ້ງການ

ເຖິງຢ່າງໃດກໍ່ຕາມ ການມີສ່ວນຮ່ວມຂອງທຸກໆຄົນ ເປັນສິ່ງທີຂາດ ບໍ່ໄດ້. ສໍາລັບລາຍລະອຽດຕ່າງໆນັ້ນ ສາມາດອອກຄໍາຄິດຄໍາເຫັນ ໄດ້ທາງ Email ຂອງສະມາຄົມ.

ສະນັ້ນເພື່ອເຮັດໃຫ້ ຈົດໝາຍຂ່າວນີ້ ກໍ່ຄື E-newsletter ເປັນຂອງທຸກຄົນ ແລະເພື່ອທຸກຄົນ ຈິງຢາກຂໍໃຫ້ທຸກຄົນ ມີສ່ວນຮ່ວມນໍາກັນ ເຮັດໃຫ້ສິ່ງເຫລົ່ານີ້ມີຄ່າຍິງຂື້ນ.

# ບົດມ້ວນທ້າຍ

ຈົດໝາຍນີ້ເປັນສະບັບທີ5, ເຊິ່ງແຕ່ລະສະບັບກໍ່ມີ ຄະນະຈັດພິມທີ່ແຕກຕ່າງກັນໄປ ອາດຈະເຮັດໃຫ້ເນື້ອໃນ ແລະວິທີການນຳສະເໜີກໍ່ແຕກຕ່າງກັນໄປ.

ສຳລັບສະບັບທີ5 ສະບັບນີ້ກໍ່ມີຫລາຍຢ່າງທີ່ຍາກຈະພິມ ຍາກສະເໜີ ແຕ່ຍ້ອນສະພາບໃນຕົວແລະນອກຕົວ,ຈຶ່ງເຮັດໃຫ້ມີການລ່າຊ້າ ແລະອາດມີເນື້ອໃນທີ່ບໍ່ຫລາຍດັ່ງທຸກໆຄົນຄາດຫວັງ, ແຕ່ເຖິງຢ່າງໃດກໍ່ຕາມ ຕາງໜ້າຄະນະຈັດພິມ ກໍ່ຂໍຂອບໃຈນຳສະມາຊິກ ທີ່ໄດ້ສົ່ງບົດຄວາມ ແລະຄຳຕິຊົມຕ່າງໆ ເຊິ່ງມັນໄດ້ເຮັດໃຫ້ຈົດໝາຍຂ່າວສະບັບນີ້ສຳເລັດໄດ້. ສິ່ງທີ່ສຳຄັນທີ່ສຸດກໍ່ຄືການມີສ່ວນຮ່ວມຂອງທຸກໆຄົນ ຈຶ່ງຈະສາມາດເຮັດໃຫ້ເກີດມີຈົດໝາຍຂ່າວສະບັບນີ້ ກໍ່ຄືສະບັບຕໍ່ໆໄປ ທີ່ມີພ້ອມທາງດ້ານເນື້ອຫາ ແລະຈຳນວນ.

ທ້າຍສຸດນີ້, ອີກເທື່ອໜຶ່ງ ກໍ່ຂໍສະແດງຄວາມຂອບໃຈເປັນຢ່າງສູງ ມາຍັງສະມາຊິກທຸກໆທ່ານ ທີ່ໄດ້ປະກອບສ່ວນຮູບພາບ, ບົດຄວາມ ແລະ ຄຳຄິດຄຳເຫັນ ຕໍ່ຈົດຫມາຍຂ່າວສະບັບນີ້.

ຕາງຫນ້າຄະນະຈັດພິມ : ບັນດາໄຊ ລໍວັນໄຊ

ສະມາຄົມອະດີດ ນັກສຶກສາລາວ ຈາກຍີ່ປຸ່ນ
JAOL Japan Alumni Of Laos
ラオス元日本留学生会

ຂໍ້ມູນເພີ້ມເຕີມ ແລະ ບ່ອນຕິດຕໍ່

http://www.jaol-group.org/

info@jaol-group.org

ຈົດຫມາຍຂ່າວສະບັບນີ້ ຈັດພິມໂດຍພາຍໃຕ້ການສະຫນັບສະຫນູນ ຂອງສະຖານທູດຍີ່ປຸ່ນປະຈຳ ສປປ ລາວ, ຈຳນວນ 200ສະບັບ.
ຂໍຖືໂອກາດນີ້ ຮຽນຂອບໃຈ ມາຍັງສະຖານ ທູດຍີ່ປຸ່ນປະຈຳ ສປປ ລາວ ເປັນຢ່າງສູງ.